# ຄຳແນະນຳ ສຳລັບພໍ່ແມ່

## ກ່ຽວກັບຜແນກ ປົກປ້ອງເດັກນ້ອຍ(CPS)



ຜແນກປົກຄອງ
ເດັກນ້ອຍ

---

ຜແນກບໍຣິການ
ເດັກນ້ອຍ
ແລະຄອບຄົວ

# ສາຣະບານ


| ຫົວຂໍ້ | Page |
| --- | --- |
| ພະແນກປົກປ້ອງເດັກນ້ອຍ (CPS) ແມ່ນຫຍັງ? | 2 |
| ການຂົ່ມເຫັງ ແລະ ການປ່ອຍປະລະເລີຍເດັກນ້ອຍແມ່ນຫຍັງ? | 2 |
| ພະແນກ (CPS) ໄດ້ຍິນເຣື່ອງກ່ຽວກັບຂ້າພະເຈົ້າໄດ້ແນວໃດ? | 3 |
| ສິດແນວໃດແດ່ທີ່ພະແນກ CPS ມີຢູ່ທີ່ຈະສຳພາດລູກຂອງຂ້າພະເຈົ້າ? | 3 |
| ເມື່ອໃດຕຳຣວດຈະກ່ຽວຂ້ອງນຳ? | 4 |
| ການຄຸ້ມຄອງປ້ອງກັນ (ARS) ແມ່ນຫຍັງ? | 5 |
| ຈະມີຫຍັງເກີດຂຶ້ນຖ້າຫາກວ່າລູກຂອງຂ້າພະເຈົ້າຖືກຈັດໃສ່ການຄຸ້ມຄອງປ້ອງກັນ? | 5 |
| ການບໍຣິການແນວໃດແດ່ທີ່ມີຢູ່ໃຫ້ແກ່ຂ້າພະເຈົ້າ ແລະ ຄອບຄົວຂອງຂ້າພະເຈົ້າ? | 6 |
| ຣະບົບຕອບທາງອື່ນແມ່ນຫຍັງ? | 7 |
| ສິດແນວໃດແດ່ທີ່ຂ້າພະເຈົ້າມີຢູ່ເມື່ອເວລາຂ້າພະເຈົ້າຖືກສືບສວນໂດຍພະແນກ CPS? | 8 |
| ສິດແນວໃດແດ່ທີ່ຂ້າພະເຈົ້າມີຢູ່ຖ້າຫາກວ່າຂ້າພະເຈົ້າບໍ່ເຫັນພ້ອມນຳການກຳກັບຄະດີຂອງຂ້າພະເຈົ້າໂດຍ ພະແນກ CPS? | 9 |
| ການຈັດໃສ່ໃຫ້ຢູ່ນອກເຮືອນແມ່ນຫຍັງ? | 10 |
| "ການຫວັງເພິ່ງ"ແມ່ນຫຍັງ? | 11 |
| ສິດຂອງຂ້າພະເຈົ້າໃນຖານະເປັນພໍ່ແມ່ແມ່ນຫຍັງໃນເວລາລູກຂອງຂ້າພະເຈົ້າໄດ້ຖືກຈັດໃສ່? | 11 |
| ການເບິ່ງແຍງດູແລຢູ່ນອກເຮືອນ ຫລື ຖືກພົບວ່າເປັນຄົນຫວັງເພິ່ງ? | 13 |
| ສິດຂອງລູກຂ້າພະເຈົ້າແມ່ນຫຍັງແດ່? | 13 |
| ແມ່ນຫຍັງແດ່ທີ່ຖືກຄາດໝາຍຈາກຂ້າພະເຈົ້າ? | 14 |
| ຂ້າພະເຈົ້າໄດ້ລູກຂອງຂ້າພະເຈົ້າກັບຄືນມາແນວໃດ? | 15 |
| ຂ້າພະເຈົ້າຕ້ອງການທະນາຍຄວາມບໍ? | 16 |
| ຂ້າພະເຈົ້າຈະວາງແຜນສຳລັບອະນາຄົດຂອງລູກຂ້າພະເຈົ້າແນວໃດ? | 17 |
| "ການຕັດສິດຂອງພໍ່ແມ່" ແມ່ນຫຍັງ? | 18 |
| ເຂົາເຈົ້າສາມາດເຮັດຫຍັງໄດ້ແດ່ຖ້າຫາກວ່າມີການບໍ່ເຫັນພ້ອມນຳພະນັກງານຂອງພະແນກ CPS ກ່ຽວກັບຄຳຕັດສິນໃນເອກສານ? | 18 |
| ເຂົາເຈົ້າສາມາດຂໍເອົາລາຍລະອຽດເພີ່ມເຕີມໄດ້ຢູ່ໃສ? | 19 |
| ນະໂຍບາຍການບໍ່ແບ່ງແຍກຊົນຊັ້ນວັນນະ | 19 |

## ພະແນກປົກປ້ອງເດັກນ້ອຍ CPS ແມ່ນຫຍັງ?

ພະແນກ CPS ແມ່ນແນວນຶ່ງຂອງການເຄື່ອນໄຫວຂອງພະນັກງານຂອງພະແນກບໍຣິການເດັກນ້ອຍ ແລະ ຄອບຄົວ (DCFS) ຂອງກົມສັງຄົມແລະສົງເຄາະ (DSHS). ພະແນກ CPS ຮັບຜິດຊອບສຳລັບການປ້ອງກັນເດັກນ້ອຍຈາກການຂົ່ມເຫັງຫລືການປ່ອຍປະລະເລີຍ.

ພະແນກ CPS ໄດ້ຖືກບັງຄັບໂດຍກົດໝາຍທີ່ຈະຕ້ອງສືບສວນລາຍງານການຂົ່ມເຫັງ ຫລື ການປ່ອຍປະລະເລີຍເດັກນ້ອຍທີ່ນ່າສົງສັຍຊຶ່ງສອດຄ່ອງກັບການຕີຄວາມໝາຍທາງກົດໝາຍຂອງການຂົ່ມເຫັງ ຫລື ການປ່ອຍປະລະເລີຍເດັກນ້ອຍ.

## ການຂົ່ມເຫັງແລະການປ່ອຍປະລະເລີຍເດັກນ້ອຍແມ່ນຫຍັງ?

**ມັນມີຫລາຍຊະນິດຂອງການຂົ່ມເຫັງແລະການປ່ອຍປະລະເລີຍເດັກນ້ອຍ:**

ການຂົ່ມເຫັງທາງຮ່າງກາຍລວມເອົາການບາດເຈັບທຸກໆຢ່າງຕໍ່ເດັກຊຶ່ງບໍ່ແມ່ນອຸປະຕິເຫດ (ກະດູກຫັກ, ຮອຍບວບຊ້ຳ, ຮອຍໄຟໄໝ້, ຮອຍຖືກຕັດແລະການບາດເຈັບແນວອື່ນ) ຫລືການກະທຳແນວໃດແນວນຶ່ງຊຶ່ງສາມາດເປັນອັນຕະລາຍຮ້າຍແຮງຕໍ່ເດັກນ້ອຍ ແຕ່ວ່າໂຊກດີບໍ່ເປັນ (ການຕົບຕີເດັກນ້ອຍດ້ວຍອາວຸດ, ການຍິງປືນໂດຍມີເດັກນ້ອຍຢູ່ນຳ, ຫລືການກະທຳຄ້າຍຄຽງແນວອື່ນໆ) .ການຂົ່ມເຫັງທາງຈິດໃຈລວມເອົາການເຮັດໃຫ້ເດັກນ້ອຍຮູ້ສຶກວ່າເຂົາເຈົ້າບໍ່ມີໃຜຮັກ ຫລື ເຂົາເຈົ້າບໍ່ດີ ຫລືບໍ່ມີຄຸນຄ່າ (ການລົດກຽດລົງຫລືການບໍ່ຢາກເວົ້າເຖິງເດັກນ້ອຍ, ການບໍ່ອະນຸຍາດໃຫ້ເດັກນ້ອຍມີໝູ່ເພື່ອນ,ການຮ້ອງຊື່ບໍ່ດີ, ແລະ ການປະພຶດທີ່ຄ້າຍຄຽງແນວອື່ນໆ). ເຫດການຮຸນແຮງໃນຄອບຄົວອາດຈະຖືກຖືວ່າເປັນການຂົ່ມເຫັງດ້ານຈິດໃຈຕໍ່ເດັກນ້ອຍອີກຄືກັນ.



ການປ່ອຍປະລະເລີຍອາດຈະລວມເອົາການບໍ່ຈັດຫາໃຫ້ເດັກນ້ອຍ, ເຮືອນບ່ອນທີ່ປອດພັຍ, ອາຫານ, ເຄື່ອງນຸ່ງ, ຫລືການປິ່ນປົວພະຍາບານ/ແຂ້ວ, ລວມທັງການປ່ອຍປະລູກນ້ອຍໄວ້ໂດດດຽວ ຫລື ນຳຄົນໃດຄົນນຶ່ງຜູ້ທີ່ບໍ່ສາມາດເບິ່ງແຍງຕົນເອງ, ຂັບຣົດໃນຣະຫວ່າງທີ່ມຶນເມົາໂດຍບໍ່ໄດ້ຮັດສາຍແອວໃສ່ເດັກນ້ອຍຢູ່ໃນຣົດ, ອື່ນໆ. ຄວາມຜິດພາດບໍ່ເບິ່ງແຍງເດັກຄົນໃຫຍ່ສາມາດຖືກຖືວ່າເປັນການປ່ອຍປະລະເລີຍຄືກັນ.

ການຂົ່ມເຫັງທາງເພດລວມເອົາການໃຊ້ເດັກນ້ອຍສຳລັບການກະທຳທາງເພດ, ການຖ່າຍຮູບປະເປືອຍຂອງເດັກນ້ອຍ.

ການເອົາເດັກນ້ອຍໄປຂາຍຕົວ, ຫລື ການເຄື່ອນໄຫວທາງເພດຊະນິດອື່ນແນວໃດແນວນຶ່ງນຳເດັກນ້ອຍ.

ມັນມີການກະທຳແນວອື່ນຊຶ່ງສາມາດຖືກຖືວ່າເປັນຊະນິດຂອງການຂົ່ມເຫັງ ແລະ ການປ່ອຍປະລະເລີຍເດັກນ້ອຍ,ໃນແຕ່ລະກໍຣະນີ, ມັນຕ້ອງຖືກພິຈາຣະນາເບິ່ງວ່າສຸຂະພາບຂອງເດັກ, ຄວາມປອດພັຍ, ຫລືຄວາມຢູ່ເຢັນເປັນສຸກຂອງເດັກນ້ອຍໄດ້ຖືກທຳຮ້າຍ ຫລືບໍ່ ຫລື ຕົກຢູ່ໃນການສ່ຽງອັນຕະຣາຍ ຫລື ບໍ່.

## ຜແນກ **CPS** ໄດ້ຍິນເຣື່ອງກ່ຽວກັບຂ້າພະເຈົ້າໄດ້ແນວໃດ?

ຜແນກ CPS ໄດ້ຮັບລາຍງານແນະນຳບອກວ່າລູກຂອງທ່ານບໍ່ໄດ້ຮັບການປົກປ້ອງ ຫລື ການປິ່ນປົວທີ່ເຂົາເຈົ້າຕ້ອງການ.

> "ບຸກຄົນຜູ້ທີ່ລາຍງານໄປຫາຜແນກ**CPS** ຈະຂໍໃຫ້ຊື່ຂອງເຂົາເຈົ້າຖືກປົກປິດໄວ້ເປັນຄວາມລັບໄດ້."

ບາງຄົນ, ເຊັ່ນວ່າທ່ານໝໍ, ນາຍໝໍ, ນາຍຄູ, ຜູ້ປຶກສາຜແນກສັງຄົມ, ທ່ານໝໍໂຣກຈິດ,ໝໍຂາຍຢາ, ຜູ້ຮັບຝາກເດັກ,ພະນັກງານການຝາກໂທດສຳລັບເດັກນ້ອຍ,ພະນັກງານຂອງ DSHS,ພະນັກງານຂອງກົມດັດແປງນັກໂທດ, ເຈົ້າໜ້າທີ່ສົມລະສູດສິບ, ແລະຜູ້ໃຫຍ່ຜູ້ທີ່ອາສັຍຢູ່ນຳເດັກນ້ອຍຜູ້ທີ່ຖືກຂົ່ມເຫັງຫລືປ່ອຍປະລະເລີຍຢ່າງຮ້າຍແຮງໄດ້ຖືກບັງຄັບໂດຍກົດໝາຍທີ່ຈະລາຍງານການຂົ່ມເຫັງຫລືການປ່ອຍປະລະເລີຍທີ່ນຳສົງສັຍໄປຫາຜແນກ CPS ຫລືຕຳຣວດ(RCW 26.44.030).

ຄົນອື່ນຄົນໃດຄົນນຶ່ງຜູ້ທີ່ເຊື່ອວ່າເດັກນ້ອຍໄດ້ຖືກຂົ່ມເຫັງຫລືປ່ອຍປະລະເລີຍຈະລາຍງານເຫດການເຫລົ່ານີ້ໄດ້ໄປຫາຜແນກ CPS ຫລື ຕຳຣວດໄດ້, ການລາຍງານເພື່ອປອງຮ້າຍ ຫລືບໍ່ຖືກຕ້ອງໂດຍເຈຕນາແມ່ນຄວາມຜິດກົດໝາຍແລະສາມາດຖືກລົງໂທດ (RCW 26.44.060(4)). ຜູ້ລາຍງານທີ່ຖືກບັງຄັບໃຫ້ເຮັດຕ້ອງໄດ້ເຮັດການສົ່ງຕໍ່ຂອງເຂົາເຈົ້າພາຍໃນ 48 ຊົ່ວໂມງຈາກເວລາທີ່ເຂົາເຈົ້າຮູ້ຈັກການຂົ່ມເຫັງຫລືການປ່ອຍປະລະເລີຍທີ່ອາດຈະເປັນໄປໄດ້.

ບຸກຄົນຜູ້ທີ່ລາຍງານໄປຫາຜແນກ CPS ຈະຂໍໃຫ້ຊື່ຂອງເຂົາເຈົ້າຖືກປົກປິດໄວ້ເປັນຄວາມລັບໄດ້.

## ສິດທິແນວໃດທີ່ຜແນກ **CPS** ມີເພື່ອຈະສຳພາດລູກຂອງຂ້າພະເຈົ້າ?

ກົດໝາຍອະນຸຍາດໃຫ້ຜແນກ CPS ທີ່ຈະສືບສວນການລາຍງານຂອງການຂົ່ມເຫັງຫລືການປ່ອຍປະລະເລີຍທີ່ນຳສົງສັຍ.ເພື່ອຈະເຮັດການສືບສວນໃຫ້ຄົບຖ້ວນ,ພະນັກງານ

**CPS** ຈະຕ້ອງການເວົ້າກັບທ່ານ ແລະ ລູກຂອງທ່ານ, ລວມທັງຄົນອື່ນຜູ້ທີ່ອາດຈະມີຣາຍລະອຽດອັນສຳຄັນອີກ.ພແນກ **CPS** ມີສິດທີ່ຈະສຳພາດລູກຂອງທ່ານກ່ອນທີ່ຈະບອກທ່ານ ແລະ ໂດຍປາສຈາກຄຳອະນຸຍາດຈາກທ່ານ.ເດັກນ້ອຍອາດຈະຖືກສຳພາດຢູ່ໂຮງຮຽນ, ຢູ່ບ່ອນຝາກເດັກ,ຢູ່ເຮືອນ,ຫລືສະຖານທີ່ບ່ອນໃດບ່ອນນຶ່ງທີ່ຈະສະດວກແລະສະບາຍໃຈສຳລັບເດັກນ້ອຍ.

ຖ້າຫາກວ່າລູກຂອງທ່ານໄດ້ຖືກສຳພາດໂດຍພແນກ **CPS,**ທ່ານຈະຖືກແຈ້ງບອກໂດຍທັນທີໂລດ.

ພແນກ **CPS** ແລະຕຳຣວດຍັງມີສິດອຳນາດທີ່ຈະຖ່າຍຮູບເອົາເດັກນ້ອຍຕາມທີ່ຈຳເປັນເພື່ອຈະບັນທຶກສະພາບຮ່າງກາຍຂອງເດັກ.

ຫລັງຈາກການສືບສວນຊຶ່ງຈະລວມເອົາການຕີຣາຄາປະເມີນຜົນກ່ຽວກັບຄວາມເຂັ້ມແຂງຂອງຄອບຄົວແລະອັນຕຣາຍຕໍ່ເດັກນ້ອຍ,ພະນັກງານສັງຄົມອາດຈະມາຢ້ຽມຢາມເຮືອນຂອງທ່ານຕໍ່ໄປອີກເພື່ອຈະເວົ້າລົມກ່ຽວກັບບັນຫາທຸກໆຢ່າງທີ່ທ່ານມີຢູ່ນຳລູກຂອງທ່ານແລະການຊ່ວຍເຫລືອແນວໃດມີໄວ້ໃຫ້ເພື່ອຈະຊ່ວຍເຫລືອທ່ານໃນການເຮັດໃຫ້ທຸກໆສິ່ງທຸກຢ່າງດີຂຶ້ນສຳລັບທ່ານແລະລູກຂອງທ່ານ.

## ເມື່ອໃດຕຳຣວດຈະກ່ຽວຂ້ອງນຳ?

ລາຍງານກ່ຽວກັບການຂົ່ມເຫັງ/ການປ່ອຍປະລະເລີຍທີ່ນຳສົງສັຍຈະໄປຫາບໍ່ກ່ຽວວ່າພແນກ **CPS** ຫລືຕຳຣວດທ້ອງຖິ່ນກໍ່ໄດ້. ຕຳຣວດໄດ້ຖືກບັງຄັບໃຫ້ບອກພແນກ **CPS** ກ່ຽວກັບການລາຍງານທຸກໆຢ່າງທີ່ເຂົາເຈົ້າໄດ້ຮັບ.ພະນັກງານຂອງ **CPS** ຖືກບັງຄັບໃຫ້ແຈ້ງບອກຕຳຣວດການລາຍງານທຸກໆຢ່າງທີ່ຊີ້ບອກການເສັຽຊີວິດ,ການບາດເຈັບທາງຮ່າງກາຍ,ການຂົ່ມເຫັງທາງເພດຂອງເດັກນ້ອຍຫລືອາສຍາກັມທີ່ອາດຈະເປັນໄປໄດ້ແນວອື່ນ.

ຕຳຣວດຈະກ່ຽວຂ້ອງນຳຖ້າຫາກວ່າມັນເປັນການຈຳເປັນທີ່ຈະເອົາເດັກນ້ອຍໄປໃສ່ການຄຸ້ມຄອງປົກປ້ອງ. ຕຳຣວດຈະຖືກຂໍໃຫ້ຊ່ວຍເຫລືອອີກຄືກັນເມື່ອເວລາມັນມີເຫດຜົນທີ່ຈະເປັນຫ່ວງເຖິງຄວາມປອດພັຍຂອງພະນັກງານ **CPS.**

"ຕຳຣວດຈະກ່ຽວຂ້ອງນຳຖ້າຫາກວ່າມັນເປັນການຈຳເປັນທີ່ຈະເອົາເດັກນ້ອຍໄປໃສ່ການຄຸ້ມຄອງປົກປ້ອງ."

ເຖິງແມ່ນວ່າພະນັກງານ CPS ແລະຕຳຣວດເຮັດວຽກຮ່ວມກັນ,ເຂົາເຈົ້າອາດຈະທຳການສືບສວນຂອງໃຜຂອງລາວ. ຕຳຣວດທຳການສືບສວນທາງຄວາມຜິດກົດໝາຍອາຍາ,ແລະພແນກ CPS ທຳການປະເມີນຜົນເບິ່ງຄອບຄົວ.ເຖິງແມ່ນວ່າການຟ້ອງເຮັດຜິດກົດໝາຍອາຍາບໍ່ໄດ້ຖືກຍື່ນ,ພແນກ CPS ອາດຈະຍັງກ່ຽວພັນນຳຄອບຄົວຢູ່.



## “ການຄຸ້ມຄອງປ້ອງກັນ”ແມ່ນຫຍັງ?

ຢູ່ໃນເຫດການສະພາບສຸກເສີນ,ຊຶ່ງມັນຈະປາກົດວ່າເດັກນ້ອຍຕົກຢູ່ໃນອັນຕຣາຍທີ່ເຫັນວ່າຈະເກີດຂຶ້ນ,ຫລືໄດ້ຖືກຂົ່ມເຫັງຫລືປ່ອຍປະລະເລີຍຢ່າງຮ້າຍແຮງມາແລ້ວ,ເຈົ້າໜ້າທີ່ຕຳຣວດສາມາດເອົາເດັກນ້ອຍເຂົ້າໃສ່“ການຄຸ້ມຄອງປ້ອງກັນ” ໂດຍບໍ່ກາຍ 72 ຊົ່ວໂມງ (ບໍ່ນັບວັນເສົາ, ວັນອາທິດ,ແລະ ວັນພັກບຸນ) .ແລ້ວການຄຸ້ມຄອງເດັກນ້ອຍຈະຖືກສົ່ງໄປຫາພແນກ CPS ຜູ້ທີ່ຈະເອົາເດັກນ້ອຍໃສ່ໃນການຄຸ້ມຄອງຂອງພີ່ນ້ອງ ຫລືໃສ່ເຮືອນລ້ຽງເດັກບ່ອນທີ່ຖືກອະນຸຍາດ.

ການຟັງເຣື່ອງຢູ່ສານຕ້ອງຖືກຈັດຂຶ້ນພາຍໃນ72 ຊົ່ວໂມງ (ຍົກເວັ້ນວັນເສົາ, ວັນອາທິດ, ວັນພັກບຸນ) ຂອງເວລາເດັກນ້ອຍທີ່ຖືກຈັດໃສ່ການຄຸ້ມຄອງ.

## ຈະມີຫຍັງເກີດຂຶ້ນເມື່ອເວລາລູກຂອງຂ້ອຍໄດ້ຖືກເອົາໃສ່ການຄຸ້ມຄອງທີ່ຖືກປ້ອງກັນ

ເມື່ອເວລາລູກຂອງທ່ານໄດ້ຖືກເອົາໃສ່ການຄຸ້ມຄອງທີ່ຖືກປ້ອງກັນ, ທ່ານຈະຖືກແຈ້ງບອກທາງໜັງສືໂດຍໄວເທົ່າທີ່ຈະໄວໄດ້. ທ່ານຈະໄດ້ຮັບໃບຟອມຊຶ່ງບອກທ່ານວ່າເມື່ອ ແລະ ເປັນຫຍັງລູກຂອງທ່ານຈຶ່ງຖືກເອົາໃສ່ໃນການຄຸ້ມຄອງທີ່ຖືກປ້ອງກັນ. ທ່ານຍັງຈະໄດ້ຮັບຊື່ ແລະ ເລກໂທຣະສັບຂອງພະນັກງານ CPS ແລະ/ຫລື ຫ້ອງການບ່ອນທີ່ທ່ານສາມາດຂໍເອົາລາຍລະອຽດເພີ້ມເຕີມໄດ້. ທ່ານຈະຖືກແຈ້ງບອກວ່າເມື່ອໃດ ແລະ ຢູ່ໃສການຟັງເຣື່ອງກ່ຽວກັບບ່ອນຢູ່ຈະຖືກຈັດຂຶ້ນ ແລະ ທ່ານຈະສາມາດຂໍເອົາທະນາຍຄວາມທີ່ຖືກແຕ່ງຕັ້ງໂດຍສານໄດ້ແນວໃດ.

ໃນເວລາຟັງເຣື່ອງກ່ຽວກັບບ່ອນຢູ່ອາສັຍ, ທ່ານມີໂອກາດທີ່ຈະບອກສານວ່າເປັນຫຍັງລູກຂອງທ່ານບໍ່ຄວນຈະອອກຈາກເຮືອນຂອງທ່ານ. ຖ້າຫາກວ່າສານ ຫລື

ຜູ້ຟັງເຣື່ອງຂອງສານເຫັນພ້ອມນຳທ່ານ, ລູກຂອງທ່ານຈະຖືກສົ່ງຄືນ.

ຖ້າຫາກວ່າການຟັງເຣື່ອງຂອງທ່ານເກີດຂຶ້ນຕໍ່ໜ້າຜູ້ຟັງເຣື່ອງຂອງສານ, ທ່ານມີສິດທີ່ຈະໃຫ້ຄຳຕັດສິນຂອງຜູ້ຟັງເຣື່ອງຂອງສານຖືກກວດເບິ່ງຄືນໂດຍຈ່າສານຂອງສານສູງສຸດ. ເພື່ອຈະຂໍເອົາການກວດເບິ່ງຄືນ, ທ່ານຕ້ອງຍື່ນຄຳຮ້ອງຂໍເອົາການກວດເບິ່ງຄືນນຳສານພາຍໃນ 10 ວັນຂອງວັນອອກຄຳຕັດສິນຂອງຜູ້ຟັງເຣື່ອງຂອງສານ.

ພແນກ **DCFS** ຈະພິຈາຣະນາເບິ່ງວ່າການກະທຳຂອງສານບໍ່ຈຳເປັນແມ່ນແຕ່ຫລັງຈາກທີ່ການຄຸ້ມຄອງປ້ອງກັນໄດ້ຖືກເຣັດຂຶ້ນແລ້ວໂດຍຕຳຣວດ. ຢູ່ໃນກໍຣະນີເຫລົ່ານີ້, ທ່ານຈະຖືກຂໍໃຫ້ເຊັນຊື່ໃສ່ໃນສັນຍາຈັດໃສ່ເຣືອນຕາມສະມັກໃຈເພື່ອຈະໃຊ້ໄດ້ຈົນກວ່າບັນຫາສາມາດຖືກແກ້ໄຂໄດ້. ຫລື ບໍ່ດັ່ງນັ້ນລູກຂອງທ່ານຈະຖືກສົ່ງຄືນໄປໃຫ້ທ່ານຢູ່ໃນເຣືອນຂອງທ່ານ.

## ການບໍຣິການແນວໃດແດ່ທີ່ມີໄວ້ໃຫ້ຂ້າພະເຈົ້າ ແລະ ຄອບຄົວຂອງຂ້າພະເຈົ້າ?

ກົມ **DSHS** ໃຫ້ການບໍຣິການຫລາຍໆແນວເພື່ອຈະແກ້ໄກບັນຫາ. ການບໍຣິການບາງຢ່າງໄດ້ຖືກຈັດຫາໃຫ້ພາຍໃນຊຸມນຸມຊົນ. ການບໍຣິການຂອງພແນກ **CPS** ໄດ້ຖືກເອົາໃຫ້ຟຣີ ແລະ ບໍ່ກ່ຽວກັບຣາຍໄດ້.ເຖິງຢ່າງໃດກໍ່ຕາມ, ຖ້າຫາກວ່າຄອບຄົວຂອງທ່ານໄດ້ຖືກສົ່ງຕໍ່ໄປຫາອົງການບ່ອນອື່ນທີ່ເກັບເອົາເງິນ, ທ່ານຈະຕ້ອງໄດ້ຈ່າຍຄ່າທຳນຽມອັນນັ້ນ. ການບໍຣິການນອກເຣືອນເຊັ່ນວ່າການລ້ຽງລູກຢູ່ບ່ອນລ້ຽງເດັກມີຄ່າທຳນຽມທີ່ທ່ານຈະຕ້ອງໄດ້ຈ່າຍ.

> “ການບໍຣິການຂອງພແນກ **CPS** ໄດ້ຖືກເອົາໃຫ້ຟຣີ ແລະ ບໍ່ກ່ຽວກັບຣາຍໄດ້.”

ອັນນີ້ແມ່ນການບໍຣິການບາງຢ່າງຊຶ່ງພະນັກງານ **CPS** ອາດຈະສາມາດທີ່ຈະຊ່ວຍເຫລືອຄອບຄົວຂອງທ່ານຊອກຫາ: (ບໍ່ແມ່ນທຸກໆຢ່າງຂອງສິ່ງເຫລົ່ານີ້ຈະມີໄວ້ໃຫ້ຢູ່ທຸກໆສະຖານທີ່).

- ບ່ອນຢູ່ອາສັຍ/ເຄື່ອງນຸ່ງ/ການຊ່ວຍເຫລືອເງິນຈຳກັດ
- ການບໍຣິການດ້ານສຸຂະພາບ/ການປິ່ນປົວພະຍາບານ/ການປິ່ນປົວແຂ້ວ
- ການບໍຣິການອູ້ມຊູຕາມເຣືອນ
- ການຝາກລູກ
- ການບໍຣິການດ້ານວຽກງານ
- ຫ້ອງຮຽນກ່ຽວກັບການເປັນພໍ່ແມ່

- ການບໍລິການດ້ານການວາງແຜນຄອບຄົວ
- ການຂົນສົ່ງໄປມາ
- ການບໍລິການດ້ານໂຣກຈິດ
- ການປຶກສາດ້ານຄອບຄົວ ແລະ ການແຕ່ງງານ
- ຄັງສະບຽງອາຫານ
- ການບໍລິການດ້ານກົດໝາຍ
- ໂຄງການເຫລົ້າ ແລະ ຢາເສພຕິດ
- ການຊ່ວຍເຫລືອອາສາສມັກ: ຜູ້ຊ່ວຍພໍ່ແມ່, ພໍ່ແມ່ບໍ່ອອກຊື່
- ຄວາມຮຸນແຮງໃນຄອບຄົວ/ໂຄງການທຳຮ້າຍທາງເພດ.

## ຣະບົບຕອບທາງອື່ນ (ARS) ແມ່ນຫຍັງ?

ຢູ່ໃນຣັດວໍຊິງຕັນ, ລາຍງານຂອງພແນກ **CPS** ໄດ້ຖືກຕີຣາຄາໂດຍໃຊ້ແບບຢ່າງການຕີຣາຄາເບິ່ງອັນຕຣາຍ.ຖ້າຫາກວ່າຣາຍລະອຽດທີ່ໄດ້ເອົາໃຫ້ພະນັກງານຈິດຊີ້ຊີ້ບອກຣະດັບອັນຕຣາຍຕໍ່ລູກຂອງທ່ານນັ້ນຕ່ຳ, ເອກສານຂອງທ່ານຈະຖືກສົ່ງຕໍ່ໄປຫາອົງການຂ້າງນອກຊຶ່ງໄດ້ເຊັນສັນຍານຳພແນກ **CPS** ທີ່ຈະເອົາການບໍຣິການອູ້ມຊູພິເສດໃຫ້ເພື່ອຈະຊ່ວຍເຫລືອທ່ານກໍ່ສ້າງຕານ່າງອ້ອມຕົວທ່ານເອງ ແລະ ລູກຂອງທ່ານຊຶ່ງຈະຮັບປະກັນການປ້ອງກັນສຳລັບລູກຂອງທ່ານແລະການອູ້ມຊູດ້ານຈິດໃຈ ແລະ ຊະນິດອື່ນສຳລັບທ່ານ.

ການເຂົ້າຮ່ວມນຳຜູ້ໃຫ້ການບໍຣິການ ARS ແມ່ນຕາມສະມັກໃຈ, ແລະ ທ່ານຈະປະຕິເສດການບໍຣິການກໍໄດ້.ເຖິງຢ່າງໃດກໍ່ຕາມ, ຜູ້ໃຫ້ການບໍຣິການເຫລົ່ານີ້ສາມາດຊ່ວຍເຫລືອທ່ານໄດ້ສເນີໃຫ້ໄດ້ຮັບການບໍຣິການຊຶ່ງຈະຊ່ວຍເຫລືອທ່ານແລະ ລູກຂອງທ່ານໃຫ້ມ່ວນຊື່ນກວ່າເກົ່າ ແລະ ສະບາຍໃຈກວ່າເກົ່າ. ພວກເຮົາເຊື່ອວ່າ,ຖ້າຫາກວ່າທ່ານມີການອູ້ມຊູຊະນິດທີ່ທ່ານຕ້ອງການຢູ່ໃນຊຸມນຸມຊົນແລ້ວ, ທ່ານຈະບໍ່ກາຍເປັນຜູ້ຮັບການຊ່ວຍເຫລືອຂອງພແນກ **CPS.**

## ສິດແນວໃດແດ່ທີ່ຂ້າພະເຈົ້າມີເມື່ອເວລາຂ້າພະເຈົ້າຖືກສືບສວນໂດຍ ພແນກ CPS?

ບໍ່ວ່າເມື່ອໃດທີ່ກົມໄດ້ທຳການສືບສວນກ່ຽວກັບລາຍງານການຂົ່ມເຫັງ ຫລື ການປ່ອຍປະລະເລີຍແລ້ວໆພາຍໃຕ້ກົດໝາຍ **26.44RCW,** ກົມຕ້ອງໄດ້ແຈ້ງບອກຜູ້ອາດຈະກະທຳຄວາມຜິດທີ່ຖືກກ່າວຫາຂອງລາຍງານ ແລະ ການຄົ້ນພົບຂອງການສືບສວນຂອງກົມ. ການແຈ້ງບອກຈະຖືກເຮັດໂດຍທາງໄປສະນີຢັ້ງຢືນໄປຫາຢູ່ບ່ອນຮູ້ຈັກສຸດທ້າຍໝູ່ຂອງຄົນນັ້ນ.

ມັນມີການຄົ້ນພົບທີ່ອາດຈະເປັນໄປໄດ້ສາມຢ່າງ. ພົບເຫັນ ໝາຍຄວາມວ່າພະນັກງານສືບສວນໄດ້ພົບຣາຍລະອຽດພຽງພໍທີ່ໄດ້ເຊື່ອວ່າໄດ້ເກີດຂື້ນຫລາຍກວ່າບໍ່ເກີດຂື້ນ, ທີ່ການຂົ່ມເຫັງ ຫລື ການປ່ອຍປະລະເລີຍທີ່ຖືກກ່າວຫາໄດ້ເກີດຂື້ນ. ບໍ່ພົບເຫັນ ໝາຍຄວາມວ່າພະນັກງານສືບສວນໄດ້ພົບຣາຍລະອຽດນັ້ນວ່າບອກວ່າການຂົ່ມເຫັງ ຫລື ການປ່ອຍປະລະເລີຍຖືກກ່າວຫາບໍ່ໄດ້ເກີດຂື້ນຫລາຍກວ່າໄດ້ເກີດຂື້ນ. ລົງຄວາມເຫັນບໍ່ໄດ້ ໝາຍຄວາມວ່າພະນັກງານສືບສວນບໍ່ສາມາດພິຈາຣະນາໄດ້ວ່າການຂົ່ມເຫັງ ຫລື ການປ່ອຍປະລະເລີຍທີ່ຖືກກ່າວຫາໄດ້ເກີດຂື້ນ ຫລື ບໍ່.

ຖ້າຫາກວ່າທ່ານໄດ້ຖືກບົ່ງຊີ້ວ່າເປັນຜູ້ຖືກກ່າວຫາຢູ່ໃນໃບລາຍງານກ່ຽວກັບການຂົ່ມເຫັງ ຫລື ການປ່ອຍປະລະເລີຍທີ່ຖືກພົບເຫັນ, ທ່ານມີສິດທີ່ຈະຂໍເອົາການກວດເບິ່ງຄືນ ແລະ ການດັດແປງໃນການຄົ້ນພົບ. ພາຍໃນຊາວເອັດວັນປະຕິທິນຫລັງຈາກທີ່ໄດ້ຮັບໃບແຈ້ງການຈາກກົມ, ທ່ານຈະຂໍໃຫ້ກົມກວດເບິ່ງການຄົ້ນພົບຄືນໄດ້. ຄຳຮ້ອງຂໍຈະຖືກເຮັດທາງໜັງສືໄດ້. ຖ້າຫາກວ່າຄຳຮ້ອງຂໍເອົາການກວດເບິ່ງຄືນບໍ່ໄດ້ຖືກເຮັດພາຍໃນເວລາທີ່ບົ່ງໃວ້,ທ່ານຈະບໍ່ຄັດຄ້ານການຄົ້ນພົບໄດ້ອີກຕໍ່ໄປ, ແລະ ທ່ານຈະບໍ່ມີສິດໃນການຟັງເຣື່ອງຂອງສານ ຫລື ການກວດເບິ່ງຄືນຂອງສານໃນການຄົ້ນພົບ.

ຫລັງຈາກໄດ້ຮັບຄຳຮ້ອງຂໍເອົາການກວດເບິ່ງຄືນແລ້ວ, ກົມຈະກວດເບິ່ງຄືນ ແລະ ຖ້າຫາກວ່າເໝາະສົມ, ປ່ຽນແປງການຄົ້ນພົບ. ພະນັກງານປົກຄອງຫ້ອງຖິ່ນແມ່ນຮັບຜິດຊອບສຳລັບການກວດເບິ່ງຄືນອັນນີ້. ເມື່ອການກວດເບິ່ງຄືນໄດ້ເຮັດແລ້ວ, ກົມຈະແຈ້ງບອກທ່ານທາງໜັງສືກ່ຽວກັບການຄົ້ນພົບຂອງກົມ. ໃບແຈ້ງການຈະຖືກສົ່ງໄປທາງໄປສະນີຢັ້ງຢືນໄປຫາທີ່ຢູ່ບ່ອນຮູ້ຈັກສຸດທ້າຍໝູ່ຂອງທ່ານ.

ຖ້າຫາກວ່າ, ຫລັງຈາກການກວດເບິ່ງຄືນຂອງຫ້ອງການ, ລາຍງານຍັງແມ່ນພົບເຫັນຢູ່ຄືເກົ່າ, ທ່ານຈະຂໍເອົາການຟັງເຣື່ອງຈາກສານກໍ່ໄດ້ເພື່ອຈະຄັດຄ້ານການຄົ້ນພົບ. ຄຳຮ້ອງຂໍເອົາການຟັງເຣື່ອງຂອງສານຕ້ອງຖືກຍື່ນພາຍໃນສາມສິບວັນຫລັງ

ຈາກທີ່ໄດ້ຮັບໃບແຈ້ງການຂອງການຄົ້ນພົບໃນການກວດເບິ່ງຄືນຂອງຫ້ອງການ. ຖ້າຫາກວ່າຄຳຮ້ອງຂອງທ່ານສຳລັບການຟັງເຣື່ອງຈາກສານບໍ່ໄດ້ຖືກເຮັດພາຍໃນກຳນົດເວລາທີ່ຕ້ອງການ, ທ່ານຈະບໍ່ຄັດຄ້ານການຄົ້ນພົບໄດ້ພາຍຫລັງ ແລະ ທ່ານຈະບໍ່ມີສິດໃນການກວດເບິ່ງຄືນຈາກກົມໃນພາຍຫລັງອີກ ຫລື ການກວດເບິ່ງຄືນຈາກສານ ຫລື ການກວດເບິ່ງຄືນຈາກຣະບົບສານກ່ຽວກັບການຄົ້ນພົບ.

## ສິດແນວໃດແດ່ທີ່ຂ້າພະເຈົ້າມີຖ້າຫາກວ່າຂ້າພະເຈົ້າບໍ່ເຫັນພ້ອມນຳກ່ຽວກັບວ່າພແນກ CPS ກຳກັບກໍຣະນີຂອງຂ້າພະເຈົ້າແນວໃດ?

ຄວາມຫ່ວງໄຍຕົ້ນຕໍຂອງພແນກ **CPS** ແມ່ນເພື່ອຈະຮັບປະກັນວ່າທຸກໆຄົນຜູ້ທີ່ຕິດຕໍ່ວຽກງານນຳຫ້ອງການໄດ້ຖືກເຮັດນຳຢ່າງຍຸຕິທັມ ແລະ ດ້ວຍຄວາມນັບຖື. ດ້ວຍເຫດຜົນອັນນັ້ນ, ພວກເຮົາມີນະໂຍບາຍ ແລະ ວິທີການຮ້ອງທຸກຂອງປະຊາຊົນ ແລະ ປື້ມຄູ່ມືພິເສດທີ່ອະທິບາຍວິທີທາງເພື່ອຈະຮັບປະກັນວ່າຄວາມຂ້ອງໃຈໄດ້ຖືກສເນີໃຫ້ເປັນທາງການ, ຍຸຕິທັມ ແລະ ທັນກັບເວລາ. ຄວາມຂ້ອງໃຈກ່ຽວກັບແນວທາງທີ່ເອກສານຂອງທ່ານໄດ້ຖືກປະຕິບັດແນວໃດສາມາດຖືກນຳຂຶ້ນມາເວົ້າໄດ້ໂດຍທ່ານ, ໂດຍລູກຂອງທ່ານ, ໂດຍສະມາຊິກຄອບຄົວ, ໂດຍນັກຊ່ຽວຊານຢູ່ໃນຊຸມນຸມຊົນ, ຫລື ໂດຍຄົນໃດຄົນນຶ່ງຜູ້ທີ່ມີຄວາມຮັບຮູ້ໃນສະພາບການ.

ຖ້າຫາກວ່າທ່ານມີຄຳຮ້ອງທຸກ ຫລື ຄວາມຂ້ອງໃຈກ່ຽວກັບແນວທາງທີ່ກໍຣະນີຂອງທ່ານໄດ້ຖືກເຮັດນຳ ຫລື ກຳກັບເຮັດຢູ່ໂດຍພແນກ **CPS**, ທ່ານຄວນຈະກ່ອນອື່ນໝົດອະທິບາຍຄວາມຂ້ອງໃຈຂອງທ່ານໃຫ້ພະນັກງານບໍຣິການສັງຄົມຜູ້ທີ່ຖືກແຕ່ງຕັ້ງຟັງນຳ. ຖ້າຫາກວ່າອັນນີ້ບໍ່ສາມາດແກ້ໄຂບັນຫາໄດ້, ທ່ານສາມາດຕິດຕໍ່ໄປຫາຫົວໜ້າຄຸມຄອງງານຂອງພະນັກງານໂດຍກົງໂລດ. ຖ້າຫາກວ່າເຣື່ອງບໍ່ສາມາດຖືກແກ້ໄຂໄດ້ໂດຍຫົວໜ້າຄວບຄຸມງານ, ທ່ານສາມາດຕິດຕໍ່ໄປຫາຜູ້ປົກຄອງເຂດໄດ້ ແລະ ຫລັງຈາກນັ້ນ, ຜູ້ປົກຄອງທ້ອງຖິ່ນ.ທ່ານຈະຕິດຕໍ່ໄປຫາຫ້ອງການປະຊາສັມພັນໄດ້ທີ່ເລກ **1-800-723-4831** ເພື່ອຄວາມຊ່ວຍເຫລືອໃນການແກ້ໄຂບັນຫາໄດ້ໃນທຸກໆເວລາ.

ທຸກໆຄົນຍັງຈະເອົາຄຳຮ້ອງທຸກໄປຫາຫ້ອງການຟັງຄຳຮ້ອງທຸກຂອງພແນກບໍຣິການຄອບຄົວ ແລະ ເດັກນ້ອຍໄດ້ທີ່ເລກ **1-800-571-7321** ຊຶ່ງແມ່ນຫ້ອງການບ່ອນນຶ່ງຕ່າງຫາກຈາກກົມ **DSHS** ແລະ ມີສິດທີ່ຈະສືບສວນຄວາມຮ້ອງທຸກໆຢ່າງກ່ຽວກັບການກະທຳຂອງກົມປົກຄອງເດັກນ້ອຍຊຶ່ງຖືກສເນີຂຶ້ນມາຈາກປະຊາຊົນ

ຄົນໃດຄົນນຶ່ງຂອງຮັດວິຊີງຕົນ. ຜູ້ຟັງຄຳຮ້ອງທຸກຕາມທັມມະດາແລ້ວຈະຄາດໝາຍວ່າວິທີການແກ້ໄຂຄຳຮ້ອງທຸກຂອງພາຍໃນກົມຈະຖືກໃຊ້ກ່ອນທີ່ຫ້ອງການນັ້ນຈະມີສ່ວນກ່ຽວຂ້ອງນຳ.

## ການຈັດໃສ່ນອກເຮືອນແມ່ນຫຍັງ?

ໃນເວລາສ່ວນຫລາຍແລ້ວ, ເດັກນ້ອຍທີ່ຖືກລາຍງານມາຫາພແນກ CPS ບໍ່ໄດ້ຖືກເອົາຈາກເຮືອນຂອງເຂົາເຈົ້າ. ເດັກນ້ອຍຈະຖືກເອົາອອກຈາກພໍ່ແມ່ຂອງເຂົາເຈົ້າເມື່ອເວລາມັນເປັນການຈຳເປັນທີ່ຈະປ້ອງກັນເຂົາເຈົ້າຈາກອັນຕະລາຍໃນທັນທີເທົ່ານັ້ນ ຫລື ການຂົ່ມເຫັງ ຫລື ການປ່ອຍປະລະເລີຍດຳເນີນຕໍ່ໄປ.

ພີ່ນ້ອງຜູ້ທີ່ເໝາະສົມຕາມປົກະຕິແລ້ວຈະເປັນບ່ອນເອົາເດັກໄປໄວ້ທີ່ເໝາະສົມທີ່ສຸດສຳລັບເດັກນ້ອຍ. ຖ້າຫາກວ່າບໍ່ມີພີ່ນ້ອງຜູ້ທີ່ເໝາະສົມ, ເດັກນ້ອຍຈະຖືກເອົາໄປໄວ້ນຳເຮືອນລ້ຽງເດັກບ່ອນທີ່ມີໃບອະນຸຍາດ. ພໍ່ລ້ຽງແມ່ລ້ຽງເບິ່ງແຍງເດັກນ້ອຍແຕ່ລະວັນ ແລະ ໄດ້ຮັບເງິນທົດແທນເພື່ອຊ່ວຍຈ່າຍຄ່າເບິ່ງແຍງເດັກ. ເດັກນ້ອຍ ແລະ ພໍ່ລ້ຽງແມ່ລ້ຽງໄດ້ຖືກຄວບຄຸມນຳໂດຍພະນັກງານສັງຄົມຜູ້ທີ່ຖືກແຕ່ງຕັ້ງນານເທົ່ານານທີ່ເດັກນ້ອຍຍັງຢູ່ໃນການຈັດໃສ່.

ເດັກນ້ອຍບາງຄົນມີບັນຫາຮ້າຍແຮງຊຶ່ງເຂົາເຈົ້າບໍ່ສາມາດຢູ່ໃນສະພາບຄອບຄົວໄດ້. ເດັກນ້ອຍເຫລົ່ານີ້ຈະຖືກໃສ່ເຮືອນເປັນໝູ່ ຫລື ສະຖານທີ່ປິ່ນປົວ.ສະຖານທີ່ຈັດຕັ້ງເຫລົ່ານັ້ນມີອຸປກອນດີກວ່າເພື່ອຈະປະເຊີນກັບເດັກນ້ອຍຜູ້ທີ່ມີບັນຫາການປະພຶດບໍ່ດີຮ້າຍແຮງ ຫລືຜູ້ທີ່ມີບັນຫາໂຣກຈິດ.

ຢູ່ໃນກໍຣະນີຮ້າຍແຮງທີ່ສຸດ, ກົມ ຫລື ບຸກຄົນອື່ນຄົນໃດຄົນນຶ່ງຈະຍື່ນຟ້ອງຂຶ້ນສານບອກວ່າເດັກນ້ອຍ:

- ໄດ້ຖືກປ່ອຍປະຖິ້ມ
- ໄດ້ຖືກຂົ່ມເຫັງ ແລະ ປ່ອຍປະລະເລີຍ
- ບໍ່ມີພໍ່ແມ່, ຜູ້ປົກຄອງ, ຫລື ຜູ້ຄຸ້ມຄອງທີ່ສາມາດເບິ່ງແຍງດູແລເດັກນ້ອຍ.

> “ທ່ານມີສິດທີ່ຈະໄດ້ຮັບຄວາມສ່ວຍເຫລືອ ແລະ/ຫລື ການປຶກສາສຳລັບບັນຫາທີ່ຈະຖືກແກ້ໄຂ”

ສານຈະຈັດການຟັງເຣື່ອງຂຶ້ນເພື່ອຈະພິຈະຣະນາເບິ່ງວ່າເຫດຜົນແນວນຶ່ງຂອງເຫດຜົນເຫລົ່ານີ້ ສຳລັບການຫວັງເພິ່ງປາກົດວ່າມີຢູ່. ສານຈະຕັດສິນອີກວ່າເດັກນ້ອຍຄວນຈະຢູ່ໃນເຮືອນຂອງ ເຂົາເຈົ້າເອງ ຫລື ຖືກຈັດໃຫ້ໄປຢູ່ນອກເຮືອນ, ແລະ ຜູ້ທີ່ຈະເບິ່ງຄວບຄຸມນຳເດັກນ້ອຍໃນຣະຫວ່າງ ເວລາທີ່ສານກ່ຽວຂ້ອງນຳ. ຄຳສັ່ງຂອງສານຊົ່ວຄາວອັນນີ້ໄດ້ຖືກເອີ້ນວ່າ “ການຫວັງເພິ່ງ”.

ການຟັງເຣື່ອງການກວດເບິ່ງການຫວັງເພິ່ງຄືນຈະຖືກຈັດຂຶ້ນທຸກໆຫົກເດືອນເພື່ອຈະເບິ່ງວ່າແຜນ ການຂອງສານທີ່ຈະເຕົ້າໂຮມຄອບຄົວໄດ້ຄືບໜ້າໄປດີປານໃດ ແລະ ວ່າການກ່ຽວພັນນຳຂອງສານຈະຕ້ອງໄດ້ດຳເນີນຕໍ່ໄປຫລື ບໍ່.

## ສິດທິຂອງຂ້າພະເຈົ້າແມ່ນຫຍັງໃນຖານະເປັນພໍ່ແມ່ເມື່ອເວລາລູກຂອງ ຂ້າພະເຈົ້າໄດ້ຖືກເອົາໃສ່ໃນການເບິ່ງແຍງດູແລນອກເຮືອນ ຫລື ຖືກພົບວ່າເປັນຜູ້ຫວັງເພິ່ງ.

ພໍ່ແມ່ມີສິດເພີ່ມເຕີມບາງຢ່າງນອກຈາກວ່າສານສັ່ງອອກມາແນວອື່ນ.



ຖ້າຫາກວ່າເດັກນ້ອຍໄດ້ຖືກຈັດໃສ່ການຄຸ້ມຄອງປ້ອງກັນ, ທ່ານມີສິດທີ່ຈະຖືກແຈ້ງບອກໃຫ້ທັນກັບເວລາ ແລະ ຖືກແຈ້ງບອກວ່າເປັນຫຍັງເດັກນ້ອຍຈຶ່ງຖືກຈັດໃສ່. ຖ້າຫາກວ່າລູກຂອງທ່ານຢູ່ໃນການຈັດໃສ່ໃຫ້ຢູ່ນອກເຮືອນ (ການລ້ຽງເດັກກຳພ້າ, ເຮືອນລ້ຽງເດັກເປັນໝູ່, ຫລື ສະຖານທີ່ຄຸມຂັງ), ທ່ານມີສິດທີ່ຈະໄປຢ້ຽມຢາມເດັກ, ນອກຈາກວ່າ ສານສັ່ງອອກແນວອື່ນ. ຄຳສັ່ງຂອງສານຕາມທັມມະດາແລ້ວຈະພິຈາຣະນາເບິ່ງ ຣະຍະເວລາ ແລະ ສະຖານທີ່ຂອງການຢ້ຽມຢາມເຫລົ່ານີ້.

ທ່ານສາມາດສອບຖາມການຕັດສິນທຸກໆອັນໄດ້ສເມີຊຶ່ງຈຳກັດ ຫລື ປະຕິເສດສິດທິໃນ ການຢ້ຽມຢາມ.

ພແນກ CPS ຈະເຮັດທຸກສິ່ງທຸກຢ່າງດ້ວຍອຳນາດຂອງເຂົາເຈົ້າທີ່ຈະແຈ້ງ ໃຫ້ທ່ານຊາບຕລອດເຖິງຜົນຄືບໜ້າຂອງສຸຂະພາບ ແລະ ການຈະເຣີນເຕີບໂຕ ຂອງລູກທ່ານ, ຜົນຄືບໜ້າຢູ່ໂຮງຮຽນ, ແລະ ການປະພຶດ. ເພື່ອຈະເຮັດອັນນີ້ໄດ້, ທ່ານຕ້ອງໄດ້ບອກໃຫ້ພະນັກງານ CPS ຂອງທ່ານໃຫ້ຮູ້ຈັກສເມີເຖິງການ ອາສັຍຢູ່ຂອງທ່ານ.

ທ່ານມີສິດທີ່ຈະຮູ້ຈັກວ່າມີຄວາມຄາດໝາຍແນວໃດແດ່ເພື່ອລູກຂອງທ່ານຈະໄດ້ກັບຄືນມາ ເຮືອນຫລັງຈາກການຈັດໃສ່ໃຫ້ໄປຢູ່ນອກເຮືອນ.

ທ່ານມີສິດທີ່ຈະຖືກປຶກສານຳບໍ່ວ່າເວລາໃດທີ່ການປ່ຽນແປງໄດ້ຖືກພິຈາຣະນາຢູ່ໃນແຜນການຊຶ່ງສະທ້ອນເຖິງທ່ານຫລື ລູກຂອງທ່ານ.

ທ່ານມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫລືອ ແລະ/ຫລື ການປຶກສາສຳລັບບັນຫາທີ່ຈະຖືກແກ້ໄຂ.

ທ່ານມີສິດທີ່ຈະໄດ້ໃບແຈ້ງການລ່ວງໜ້າກ່ອນ, ແລະ ເພື່ອຈະໄປເຂົ້າຮ່ວມ, ການຟັງເຣື່ອງຂອງສານທຸກໆຢ່າງຊຶ່ງໄດ້ຖືກຈັດຂຶ້ນກ່ຽວກັບລູກຂອງທ່ານ ຫລື ສະທ້ອນເຖິງສິດທິພໍ່ແມ່ຂອງທ່ານ ຍົກເວັ້ນແຕ່ຖ້າຫາກວ່າສານໄດ້ເຮັດວຽກໃນສະພາບການສຸກເສີນ).

ທ່ານມີສິດທີ່ຈະຂໍເອົາການຟັງເຣື່ອງຈາກສານກ່ຽວກັບການເບິ່ງແຍງດູແລດ້ານບ່ອນຢູ່ອາສັຍເມື່ອເວລາທ່ານບໍ່ສາມາດ, ດ້ວຍເຫດຜົນດີ, ທີ່ຈະເຂົ້າຮ່ວມໃນການຟັງເຣື່ອງ 72 ຊົ່ວໂມງ.

ທ່ານມີສິດທີ່ຈະຮັບຄຳຕັດສິນສຳລັບການຟັງເຣື່ອງແຕ່ລະເທື່ອອີງໃສ່ແຕ່ຫລັກຖານທີ່ຖືກສເນີໃນເວລາຟັງເຣື່ອງເທົ່ານັ້ນດ້ວຍຈ່າສານທີ່ບໍ່ອຽງໃສ່ຝ່າຍໃດ ຫລື ຊອກຫາຄວາມຈິງ.

ທ່ານມີສິດທີ່ຈະມີທະນາຍຄວາມບໍ່ວ່າເມື່ອໃດການດຳເນີນການທາງສານໄດ້ກ່ຽວຂ້ອງນຳ. ຖ້າຫາກວ່າທ່ານບໍ່ສາມາດຈ້າງທະນາຍຄວາມໄດ້, ພະນັກງານ CPS ຂອງທ່ານຈະເອົາຣາຍລະອຽດໃຫ້ບອກວ່າຈະໄດ້ທະນາຍຄວາມແຕ່ງຕັ້ງໃຫ້ໂດຍສານໄດ້ແນວໃດ.

ລູກຄ້າທຸກໆ ຄົນມີສິດທີ່ຈະໄດ້ຮັບການບໍຣິການທີ່ຖືກເອົາໃຫ້ໃນພາສາທີ່ເຂົາເຈົ້າມັກຫລາຍກວ່າ ແລະ ໃນແບບອີງຕາມຄວາມຮູ້ສຶກທາງປະເພນີ.

> ❝ ພແນກ CPS ຕ້ອງການທີ່ຈະຮັກສາລູກຂອງທ່ານຢູ່ເຮືອນໂດຍນານເທົ່າທີ່ມັນປອດພັຍສຳລັບລູກ. ❞

## ສິດທິຂອງລູກຂ້າພະເຈົ້າແມ່ນຫຍັງ?

**ລູກຂອງທ່ານມີສິດ, ຄືກັນ. ມັນລວມເອົາ:**

- ມີສິດໄດ້ຮັບອາຫານ, ທີ່ຢູ່ອາສັຍ, ແລະ ເຄື່ອງນຸ່ງເພື່ອຈະຕອບສນອງຄວາມຕ້ອງການຂອງເຂົາເຈົ້າ.
- ສິດໄດ້ຮັບການປ້ອງກັນ ແລະ ການປົດປ່ອຍຈາກການເສັຽຫາຍ, ການຂາຍໜ້າ, ອັນຕຣາຍ, ການບາດເຈັບ ແລະ ການປ່ອຍປະລະເລີຍ.

- ສິດທິໄດ້ຮັບຄວາມໝັ້ນຄົງທາງຈິດໃຈ.
- ສິດທິຈະໄດ້ຮັບການປິ່ນປົວສຸຂະພາບ, ຊຶ່ງລວມເອົາການກວດເບິ່ງ ແລະ ການປິ່ນປົວພະຍາບານ, ແຂ້ວ ແລະສະພາບທາງຈິດໃຈ.
- ສິດທິຈະໃຫ້ສິດທິຂອງເຂົາເຈົ້າຖືກປ້ອງກັນໃນຣະຫວ່າງການດຳເນີນການທາງສານທຸກໆຢ່າງ. ບຸກຄົນຜູ້ທີ່ຖືກເອີ້ນວ່າ "Guardian-ad-litem" ຈະຖືກແຕ່ງຕັ້ງໂດຍສານເພື່ອຊ່ວຍປ້ອງກັນສິດທິຂອງເດັກນ້ອຍ. ອັນນີ້ເກີດຂຶ້ນຖ້າຫາກວ່າການກະທຳຂອງສານແນວໃດແນວນຶ່ງໄດ້ເກີດຂຶ້ນ.

## ມີຫຍັງແດ່ທີ່ຖືກຄາດໝາຍຈາກຂ້າພະເຈົ້າ?

ທ່ານມີຄວາມຮັບຜິດຊອບບາງຢ່າງ:

- ທ່ານຈະເອົາໃຫ້ລູກຂອງທ່ານດ້ວຍເຄື່ອງນຸ່ງອັນຈຳເປັນ ແລະ ສິ່ງຂອງໃຊ້ສ່ວນຕົວ (ເຄື່ອງນຸ່ງນອນ, ເຄື່ອງຫລິ້ນ, ຫລື ສິ່ງອື່ນໆ) ເພື່ອຊ່ວຍເຫລືອລູກຂອງທ່ານໃຫ້ຢູ່ຢ່າງສຸກສະບາຍໃຈຖ້າຫາກວ່າເຂົາເຈົ້າຢູ່ໃນການເບິ່ງແຍງດູແລຢູ່ນອກເຮືອນຂອງທ່ານ.
- ທີ່ຈະໄປຢັ້ຽມຢາມລູກຂອງທ່ານເປັນປະຈຳ, ໃນເວລາ ແລະ ສະຖານທີ່ຊຶ່ງຖືກເຫັນພ້ອມນຳພະນັກງານ CPS.ຖ້າຫາກວ່າທ່ານຕ້ອງຂາດໄປຢ້ຽມຢາມບໍ່ໄດ້, ມັນເປັນຄວາມຮັບຜິດຊອບຂອງທ່ານທີ່ຈະແຈ້ງບອກພະນັກງານ CPS ລ່ວງໜ້າ.
- ທີ່ຈະເຮັດວຽກນຳພະນັກງານ CPS ໃນການວາງແຜນການສຳລັບອະນາຄົດຂອງລູກທ່ານ, ລວມເອົາການກະທຳທີ່ທ່ານຕ້ອງໄດ້ເຮັດ.
- ເຮັດວຽກໄປສູ່ການແກ້ໄຂບັນຫາຊຶ່ງໄດ້ກໍ່ໃຫ້ເກີດມີການຂົ່ມເຫັງ ແລະ ການປ່ອຍປະລະເລີຍ.ຖ້າຫາກວ່າພະນັກງານ CPS ແລະ/ຫລືສານສົ່ງທ່ານໄປຫາບ່ອນໃດບ່ອນນຶ່ງເພື່ອຂໍເອົາການຊ່ວຍເຫລືອກ່ຽວກັບບັນຫາ, ທ່ານຄວນຈະປະຕິບັດຕາມການສົ່ງຕໍ່ອັນນັ້ນ ຫລື ເວົ້ານຳພະນັກງານສັງຄົມຂອງທ່ານກ່ຽວກັບຄວາມຂ້ອງໃຈຂອງທ່ານ.

- ທີ່ຈະແຈ້ງບອກພະນັກງານສັງຄົມຕລອດເວລາກ່ຽວກັບການປ່ຽນແປງ ຢູ່ໃນຊີວິດຂອງທ່ານ, ເຊັ່ນວ່າທີ່ຢູ່ ຫລື ເລກໂທຣະສັບໃໝ່, ການປ່ຽນແປງ ໃນສະພາບວຽກງານ, ການແຕ່ງງານ/ການຢ່າຮ້າງ ຫລື ການປ່ຽນແປງ ອື່ນໆຊຶ່ງອາດຈະສະທ້ອນເຖິງແຜນການສຳລັບລູກຂອງທ່ານ.
- ທີ່ຈະຮັກສາໝາຍນັດພົບນຳພະນັກງານ **CPS** ແລະ ນຳຜູ້ຊ່ຽວຊານຊ່ວຍເຫລືອ ຄົນອື່ນໆ. ຖ້າຫາກວ່າທ່ານບໍ່ສາມາດຮັກສາໝາຍນັດພົບໄດ້ ຫລື ຕ້ອງການ ຍົກເລີກ, ບອກໃຫ້ພະນັກງານ **CPS** ຂອງທ່ານຊາບລ່ວງໜ້າ.
- ທີ່ຈະເອົາຣາຍລະອຽດກ່ຽວກັບລູກຂອງທ່ານໃຫ້, ລວມທັງການປິ່ນປົວພະຍາບານ, ສະພາບໂຮງຮຽນ, ຫລື ຣາຍລະອຽດອື່ນໆຊຶ່ງຈະສະທ້ອນເຖິງແຜນການ ຂອງລູກທ່ານ.
- ທີ່ຈະເວົ້າກ່ຽວກັບການປິ່ນປົວ ແລະ ພົນລືບໜ້າຂອງລູກທ່ານ ນຳພະນັກງານ **CPS.**
- ທີ່ຈະຈ່າຍເງິນຊ່ວຍໃນຄ່າປິ່ນປົວສຳລັບລູກຂອງທ່ານ.

## ຂ້າພະເຈົ້າຈະໄດ້ລູກຂອງຂ້າພະເຈົ້າຄືນໄດ້ແນວໃດ?

ພແນກ **CPS** ຕ້ອງການທີ່ຈະຮັກສາລູກຂອງທ່ານຢູ່ເຮືອນໂດຍນານເທົ່າທີ່ມັນ ປອດພັຍສຳລັບລູກ. ພແນກ **CPS** ໄດ້ດຳເນີນຂັ້ນຕອນເພື່ອຈະເອົາເດັກໃຫ້ໄປຢູ່ ນອກເຮືອນເທົ່ານັ້ນຍ້ອນວ່າສະພາບຢູ່ເຮືອນກໍ່ໃຫ້ເກີດການສ່ຽງອັນຕຣາຍອັນ ໃຫຍ່ຫລວງ ຫລື ເຮັດໃຫ້ເດັກຕົກຢູ່ໃນອັນຕຣາຍທັນທີໂລດ.

ຄຳຮ້ອງຂໍເອົາການຫວັງເພິ່ງ, ຊຶ່ງວ່າທ່ານໄດ້ຮັບໂກປີ້ໃບນຶ່ງ, ອະທິບາຍ ສະພາບການຊຶ່ງພະນັກງານສັງຄົມຄິດວ່າໄດ້ເຮັດໃຫ້ເດັກຂອງທ່ານຕົກຢູ່ ໃນອັນຕຣາຍ. ຖ້າຫາກວ່າທ່ານບໍ່ເຂົ້າໃຈວ່າມັນເວົ້າຫຍັງ,ຖາມພະນັກງານ ຂອງທ່ານ ແລະ ທະນາຍຄວາມໃຫ້ອະທິບາຍໃບຄຳຮ້ອງໃຫ້ທ່ານຟັງ. ເພື່ອວ່າລູກຂອງທ່ານຈະໄດ້ກັບຄືນມາຫາທ່ານ,ເງື່ອນໄຂທີ່ຖືກກ່າວ ໄວ້ໃນຄຳຮ້ອງຕ້ອງຖືກແກ້ໄຂ.

### ຫົນທາງດີທີ່ສຸດທີ່ຈະບັນລຸຜົນອັນນີ້ແມ່ນ:

- ໃຫ້ມາສເນີຕົວຢູ່ສານທຸກໆເທື່ອທີ່ມີການຟັງເຣື່ອກ່ຽວກັບລູກ ຂອງທ່ານ. ຖ້າຫາກວ່າທ່ານບໍ່ເຂົ້າມາໃນການຟັງເຣື່ອງ, ຈ່າສານຈະຕີຄວາມໝາຍການບໍ່ມາຂອງທ່ານວ່າທ່ານບໍ່ສົນໃຈ ຕໍ່ສິ່ງທີ່ເກີດຂຶ້ນຕໍ່ລູກຂອງທ່ານ.

> “ການຕັດສິດພໍ່ແມ່ໝາຍຄວາມວ່າພໍ່ແມ່ບໍ່ມີສິດ ຫລື ຄວາມຮັບຜິດຊອບແນວໃດອີກແລ້ວຕໍ່ລູກ.”

- ເຊື່ອຟັງຄຳສັ່ງຂອງສານ. ຄຳສັ່ງທຸກໆໃບທີ່ຖືກສັ່ງອອກມາໂດຍສານກ່ຽວກັບລູກຂອງທ່ານຈະລວມເອົາແຜນການທີ່ມີກິດກຳເນີດອັນເຈາະຈົງສຳລັບທ່ານ. ຖ້າຫາກວ່າສານສັ່ງໃຫ້ທ່ານໄປເຂົ້າຫ້ອງຮຽນຄວບຄຸມຄວາມໃຈຮ້າຍ ຫລື ການປິ່ນປົວຢາເສພຕິດ, ໃຫ້ເຮັດ, ເຖິງແມ່ນວ່າທ່ານຈະຄິດວ່າທ່ານບໍ່ຕ້ອງການກໍ່ຕາມ. ທ່ານອາດຈະຕື່ນຕົກໃຈໃນສິ່ງທີ່ທ່ານສາມາດຮຽນຮູ້ກ່ຽວກັບຕົວທ່ານເອງໃນຫ້ອງຮຽນ ຫລື ການປິ່ນປົວ.
- ເຮັດໃຫ້ປອດພັຍສຳລັບລູກຂອງທ່ານທີ່ຈະກັບຄືນມາເຮືອນ. ອັນນີ້ອາດຈະໝາຍຄວາມວ່າແກ້ໄຂບັນຫາທີ່ທ່ານມີຢູ່. ຫລື ມັນອາດຈະໝາຍຄວາມວ່າດຳເນີນການເພື່ອຈະສົ່ງເສີມສະພາບການເປັນຢູ່ໃນເຮືອນຂອງທ່ານ.

ສານຈະບໍ່ປ່ອຍໃຫ້ລູກຂອງທ່ານກັບຄືນມາເຮືອນຈົນກວ່າວ່າມັນຈະປອດພັຍທີ່ຈະໃຫ້ກັບຄືນມາ.

## ຂ້າພະເຈົ້າຕ້ອງການທະນາຍຄວາມບໍ່?

ທ່ານຈະຊອກຫາທະນາຍຄວາມໄດ້ໃນທຸກໆເວລາຖ້າຫາກວ່າທ່ານຕ້ອງການ. ເຖິງຢ່າງໃດກໍ່ຕາມ,ທ່ານບໍ່ສາມາດມີທະນາຍຄວາມທີ່ຖືກແຕ່ງຕັ້ງໂດຍສານໄດ້ນອກຈາກວ່າການຟ້ອງຂຶ້ນສານເຣື່ອງການຫວັງເພິ່ງໄດ້ຖືກຍື່ນ.

ຖ້າຫາກວ່າຄຳຟ້ອງຂຶ້ນສານກ່ຽວກັບການຫວັງເພິ່ງໄດ້ຖືກຍື່ນ, ທ່ານຕ້ອງການທະນາຍຄວາມ, ແລະ ຖ້າຫາກວ່າທ່ານບໍ່ສາມາດຈ້າງເອົາຄົນນຶ່ງ, ສານຈະແຕ່ງຕັ້ງຄົນນຶ່ງໃຫ້ທ່ານ. ຖ້າຫາກວ່າລູກຂອງທ່ານໄດ້ຖືກວາງໃສ່ການຄຸ້ມຄອງປ້ອງກັນ, ໃບແຈ້ງການທີ່ທ່ານໄດ້ຮັບຈະບອກທ່ານວ່າຈະຂໍເອົາຄົນນຶ່ງໄດ້ແນວໃດ. ຖ້າຫາກວ່າທ່ານບໍ່ເຂົ້າໃຈ, ຕິດຕໍ່ໄປຫາພະນັກງານ CPS ຂອງທ່ານ ຫລື ສານເຍົາວະຊົນ.

ທະນາຍຄວາມຂອງທ່ານເປັນຕົວແທນຜົນປະໂຍດຂອງທ່ານຢູ່ໃນສານ. ໃຫ້ແນ່ໃຈວ່າໄດ້ເວົ້ານຳທະນາຍຄວາມຂອງທ່ານກ່ອນການຟັງເຣື່ອງແຕ່ລະເທື່ອເພື່ອເຂົາເຈົ້າຈະຮູ້ຈັກວ່າຈະເປັນຕົວແທນຂອງທ່ານໄດ້ດີທີ່ສຸດແນວໃດ. ຖ້າຫາກວ່າທ່ານ ແລະ ພໍ່ແມ່ອີກຄົນນຶ່ງຂອງລູກທ່ານບໍ່ໄດ້ແຕ່ງງານກັນ ຫລື ຢູ່ຕ່າງຫາກກັນ, ທະນາຍຄວາມຕ່າງຫາກຈະຖືກແຕ່ງຕັ້ງໃຫ້ທ່ານທັງສອງຄົນ.

ລູກຂອງທ່ານຈະມີ “Guardian ad litem” ແຕ່ງຕັ້ງໃຫ້ເພື່ອຈະເປັນຕົວແທນຜົນປະໂຍດອັນດີທີ່ສຸດຂອງເຂົາເຈົ້າ.ບຸກຄົນນີ້ຈະຕ້ອງການ

ເວົ້ານຳທ່ານ. ຖ້າແມ່ນແລ້ວ, ເຂົາເຈົ້າຈະສາມາດເປັນຕົວແທນລູກຂອງທ່ານໃຫ້ໄດ້ດີທີ່ສຸດຖ້າຫາກວ່າທ່ານລາຍງານສິ່ງທີ່ທ່ານຮູ້ຈັກກ່ຽວກັບລູກຂອງທ່ານ.

ພະນັກງານ **CPS** ຂອງທ່ານຍັງຈະຖືກເປັນຕົວແທນໂດຍທະນາຍຄວາມຊຶ່ງຖືກຈັດຫາໃຫ້ໂດຍຫ້ອງການອັຍຍະການສານສູງສຸດ.

## ຂ້າພະເຈົ້າຈະວາງແຜນສຳລັບອະນາຄົດຂອງລູກຂ້າພະເຈົ້າໄດ້ແນວໃດ?

ການມີເຮືອນຢູ່ບ່ອນຖາວອນແມ່ນສຳຄັນຫລາຍທີ່ສຸດສຳລັບລູກຂອງທ່ານ. ຖ້າຫາກວ່າທ່ານເຄີຍຢູ່ບ່ອນລ້ຽງເດັກ ຫລື ຍ້າຍຈາກພີ່ນ້ອງໄປຫາພີ່ນ້ອງໃນເວລາເປັນເດັກນ້ອຍຢູ່, ທ່ານສາມາດເຂົ້າໃຈໄດ້ວ່າອັນນີ້ສຳຄັນເທົ່າໃດຕໍ່ລູກຂອງທ່ານ.

ພແນກ **CPS** ເຂົ້າໃຈອີກວ່າການມີບ່ອນຢູ່ຖາວອນນັ້ນສຳຄັນຫລາຍເທົ່າໃດຕໍ່ລູກຂອງທ່ານ.ການຍ້າຍເດັກນ້ອຍອອກຈາກຄອບຄົວຂອງເຂົາເຈົ້າແມ່ນຕາມທັມມະດາແລ້ວພຽງແຕ່ຊົ່ວຄາວ. ຈຸດປະສົງຂອງພແນກ **CPS** ແມ່ນເພື່ອຈະສິ້ນສຸດການຈັດໃສ່ຊົ່ວຄາວ ແລະ ໃຫ້ແນ່ໃຈວ່າເດັກນ້ອຍມີສະພາບການເປັນຢູ່ໃນເຮືອນຂອງເຂົາເຈົ້າເອງ.

ທ່ານສາມາດຊ່ວຍເຫລືອລູກຂອງທ່ານໂດຍການເຮັດວຽກນຳພແນກ **CPS** ເພື່ອຈະອອກແບບ ແລະຂຽນແຜນການ. ແຜນການອັນນີ້ຄວນຈະບົ່ງບັນຫາທີ່ທ່ານ ແລະ ພແນກ **CPS** ໄດ້ເວົ້າກັນ. ແຜນການຄວນຈະບອກວ່າສິ່ງໃດແດ່ທີ່ຕ້ອງໄດ້ເຮັດໃຫ້ແລ້ວເພື່ອຈະແກ້ໄຂບັນຫາ, ໃຜຈະເຮັດສິ່ງນັ້ນ, ແລະ ຈະໃຊ້ເວລາດົນປານໃດ.

## "ການຕັດສິດພໍ່ແມ່" ແມ່ນຫຍັງ?



ການຕັດສິດພໍ່ແມ່ໝາຍຄວາມວ່າພໍ່ແມ່ບໍ່ມີສິດ ຫລື ຄວາມຮັບຜິດຊອບແນວໃດອີກແລ້ວຕໍ່ລູກ. ພໍ່ແມ່ຈະບໍ່ມີສິດທາງກົດໝາຍທີ່ຈະພົບ ຫລື ຢ້ຽມຢາມລູກ, ບໍ່ມີສິດໃນຄວາມຄຸ້ມຄອງລູກ, ບໍ່ມີສິດຈະຕັດສິນອະນາຄົດຂອງລູກ. ສານມີອຳນາດທີ່ຈະຕັດສິນທີ່ຈະສິ້ນສຸດສິດຂອງພໍ່ແມ່ຕາມກົດໝາຍຕໍ່ລູກຂອງເຂົາເຈົ້າ.

ຢູ່ໃນບາງກໍຣະນີ, ພໍ່ແມ່ຈະປົດປ່ອຍລູກຕາມສະມັກໃຈສຳລັບການເອົາໄປລ້ຽງ

ໂດຍການເຊັນຊື່ໃສ່ເອກສານກົດໝາຍເອີ້ນວ່າ "ການລະຖິ້ມສິດພໍ່ແມ່". ການເຊັນຊື່ໃສ່ເອກສານອັນນີ້ແມ່ນເຣື່ອງສຳຄັນທີ່ສຸດຊຶ່ງຄວນຈະຄິດຢ່າງລະມັດລະວັງ ແລະ ເວົ້າລົມກັນໃຫ້ຖ້ວນຖີ່ນຳພະນັກງານສັງຄົມ ແລະທະນາຍຄວາມ.

**ສານຈະສິ້ນສຸດສິດພໍ່ແມ່ໂດຍປາສຈາກຄຳອະນຸຍາດເມື່ອເວລາ:**

- ສານໄດ້ຄົ້ນພົບວ່າການຫວັງເພິ່ງມີຢູ່;
- ສານໄດ້ສັ່ງໃຫ້ມີການດັດແປງບັນຫາຊຶ່ງກໍ່ໃຫ້ເກີດມີການຫວັງເພິ່ງ ແລະ ບັນຫາຍັງມີຢູ່ຄືເກົ່າ;
- ລູກຂອງທ່ານໄດ້ອອກຈາກການເບິ່ງແຍງຢູ່ເຮືອນຮອດ 12 ເດືອນແລ້ວ, ເລະ ທ່ານບໍ່ມີຄວາມຄືບໜ້າພຽງພໍທີ່ຈະອະນຸຍາດໃຫ້ລູກຂອງທ່ານກັບຄືນມາເຮືອນຢ່າງປອດພັຍໃນອະນາຄົດໄກ້ໆນີ້;
- ການບໍຣິການທີ່ຖືກສັ່ງໂດຍສານໄດ້ຖືກສເນີໃຫ້ ແລະ ໄດ້ຖືກເອົາໃຫ້;
- ມັນມີຄວາມເປັນໄປໄດ້ໜ້ອຍທີ່ສຸດທີ່ສະພາບການຈະດີຂຶ້ນກວ່າເກົ່າເພື່ອວ່າເດັກສາມາດກັບຄືນມາເຮືອນ; ເລະ
- ການດຳເນີນໃນຄວາມສຳຄັນຣະຫວ່າງພໍ່ແມ່ ແລະ ລູກຈະເຮັດໃຫ້ການຊອກຫາເຮືອນຖາວອນສຳລັບເດັກນັ້ນຍາກຂຶ້ນກວ່າເກົ່າ.

> ການຕັດສິດພໍ່ແມ່ໝາຍຄວາມວ່າພໍ່ແມ່ບໍ່ມີສິດ ຫລືຄວາມຮັບຜິດຊອບແນວໃດອີກແລ້ວຕໍ່ລູກ.

ທຸກໆເວລາທີ່ສິດພໍ່ແມ່ໄດ້ຖືກຕັດແລ້ວ, ພະນັກງານ DCFS ຈະເຮັດວຽກເພື່ອການຈັດໃສ່ເຮືອນຖາວອນສຳລັບເດັກ.

### ເຂົາເຈົ້າສາມາດເຮັດຫຍັງໄດ້ແດ່ຖ້າຫາກວ່າມີການຂັດແຍ້ງບໍ່ເຫັນພ້ອມກັນນຳພະນັກງານສັງຄົມ CPS ກ່ຽວກັບຄຳຕັດສິນໃນຄະດີ?

ການເວົ້າລົມຢ່າງເປີດເຜີຍນຳພະນັກງານ CPS ຕາມປົກະຕິແລ້ວສາມາດແກ້ໄຂການຕົກລົງກັນບໍ່ໄດ້ສ່ວນຫລາຍ.ເຖິງຢ່າງໃດກໍ່ຕາມ, ຖ້າ

ຫາກວ່າການຕົກລົງກັນບໍ່ໄດ້ຖືກແກ້ໄຂໃນລະດັບນັ້ນ, ທຸກໆຄົນສາມາດເລີ່ມຕົ້ນການດຳເນີນການຮ້ອງທຸກທີ່ໄດ້ຖືກກ່າວມາກ່ອນນີ້ຢູ່ໃນປື້ມຄູ່ມືເລ່ມນີ້.

ຖ້າຫາກວ່າການຫວັງເພິ່ງໄດ້ກ່ຽວຂ້ອງນຳ, ທັງພໍ່ແມ່ ແລະ ລູກຄວນຈະບອກທະນາຍຄວາມຂອງເຂົາເຈົ້າກ່ຽວກັບການຕົກລົງກັນບໍ່ໄດ້. ພະນັກງານ CPS ຈະເອົາລາຍລະອຽດອັນນີ້ໃຫ້ທະນາຍຄວາມຂອງກົມອີກຄືກັນ.

**ຖ້າຫາກວ່າບໍ່ມີທາງອອກໃນການດຳເນີນການອັນນີ້, ໃຜກໍ່ໄດ້ຈະຕິດຕໍ່ໄປຫາ:**

- The Office of the Family and Children's Ombudsman, ໄດ້ທີ່ເລກ 1-800-571-7321 ຫລື Children's Administration Office of Constituent Relations ໄດ້ທີ່ເລກ1-800-723-4831 ຫລື (360) 902-8061.
- ຖ້າຫາກວ່າຄົນໃດຄົນນຶ່ງເຊື່ອວ່າບັນຫາເປັນສິ່ງຊີ້ບອກການລ່ວງລະເມີດສິດທິພົລເມືອງ, ຫ້ອງການບ່ອນອື່ນສາມາດຖືກຕິດຕໍ່ໄປຫາໄດ້:
- Office for Civil Right, United States Department of Health And Human Services, 1-800-362-1710; TDD (206) 615-2296.
- Washington State Human Rights Commission; 1-800-605-7324, Seattle; 1-800-233-3247, Olympia; 1-800-662-2755, Yakima.
- Division of Access and Equal Opportunity, Washington State Department of Social and Health Services; 1-800-521 8060, TDD 1-800-521-8061.

ນະໂຍບາຍທຸກໆອັນ, ວິທີທາງ, ແລະ ປື້ມປະຕິບັດງານຂອງພແນກ DCFS ແມ່ນບັນທຶກຂອງສາທາຣະນະ ແລະ ສາມາດຖືກເບິ່ງໄດ້ຢູ່ຫ້ອງການທ້ອງຖິ່ນທຸກໆບ່ອນ. ກະຣຸນາໂທຣະສັບໄປຫາລ່ວງໜ້າ ແລະ ເຮັດໝາຍນັດພົບເພື່ອວ່າປື້ມປະຕິບັດງານຫົວປັດຈຸບັນສາມາດມີໄວ້ໃຫ້ເບິ່ງ ແລະ ມີຄົນໃດຄົນນຶ່ງທີ່ຈະຕອບຄຳຖາມຂອງທ່ານຢູ່ທີ່ນັ້ນອີກ.

ກົດໝາຍ, ເອີ້ນວ່າກົດໝາຍຣັດວໍຊິງຕັນທີ່ຖືກດັດແປງ (RCW) ສາມາດຖືກພົບເຫັນໄດ້ໃນພາກສ່ວນອີງໃສ່ຂອງຫໍສະມຸດໃຫຍ່ໆ, ໂດຍຜ່ານທະນາຍຄວາມ ຫລື ບາງເທື່ອຢູ່ສານ, ພາກສ່ວນທີ່ກ່ຽວຂ້ອງກັບ ພະແນກ CPS ຈະຖືກພົບເຫັນຢູ່ມາດຕຣາ 13.34, 26.44 ແລະ 74.13.

ບຸກຄົນຜູ້ທີ່ກ່ຽວຂ້ອງໂດຍກົງໃນການສືບສວນຂອງພະແນກ CPS ສາມາດ ກວດເບິ່ງເອກສານຂອງເຂົາເຈົ້າເອງໂດຍການເຣັດໝາຍນັດພົບ ຫລື ຂໍເອົາໂດຍຜ່ານຫ້ອງການ DCFS ທ້ອງຖິ່ນ. ຣາຍ ລະອຽດບາງຢ່າງຕ້ອງຖືກລືບອອກຈາກເອກສານເຫລົ່າ ນີ້ກ່ອນທີ່ມັນຈະຖືກເບິ່ງໂດຍລູກຄ້າ.



## ມະໂນບາຍການບໍ່ແບ່ງແຍກຊົນຊັ້ນວັນນະ

ມັນເປັນມະໂນບາຍຂອງພະແນກປົກຄອງເດັກນ້ອຍທີ່ວ່າບໍ່ມີບຸກຄົນໃດ ຈະຖືກແບ່ງແຍກຊົນຊັ້ນວັນນະໃສ່, ຄັດອອກຈາກການເຂົ້າຮ່ວມ, ຫລື ປະຕິເສດການ ຊ່ວຍເຫລືອຂອງໂຄງການ ຫລື ກິຈກັມທຸກໆຢ່າງ, ຫລື ຂອງຜູ້ຮັບເໝົາຂອງເຂົາເຈົ້າ, ໂດຍອີງຕາມຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ, ລັດທິ, ສາສນາ, ເພດ, ສະພາບ ແຕ່ງງານ, ອາຍຸ, ຄວາມເສັຽອົງຄະ ຫລື ການໃຊ້ໝານຳພາທີ່ຖືກຝຶກຝົນມາ ຫລື ໝາຊ່ວຍເຣັດວຽກໂດຍບຸກຄົນຜູ້ທີ່ມີຄວາມເສັຽອົງຄະ. ການອຳນວຍຄວາມສະດວກ ທີ່ເໝາະສົມສຳລັບຄົນຜູ້ທີ່ມີຄວາມເສັຽອົງຄະລວມເອົານາຍພາສາ ແລະ ເອກສານ ໃນແບບອື່ນ, ຈະຖືກຫາໃຫ້ຕາມຄຳຮ້ອງຂໍ.

- ລູກຄ້າຜູ້ທີ່ເຊື່ອວ່າເຂົາເຈົ້າໄດ້ຖືກແບ່ງແຍກຊົນຊັ້ນວັນນະໃສ່ໂດຍພະແນກປົກຄອງ ເດັກນ້ອຍຈະຍື່ນຄຳຮ້ອງທຸກໄດ້ນຳຫ້ອງການດັ່ງຕໍ່ໄປນີ້ບ່ອນໃດກໍ່ໄດ້:
- Office for Civil Right, United States Department of Health And Human Services, 1-800-362-1710; TDD (206) 615-2296.
- Washington State Human Rights Commission; 1-800-605-7324, Seattle; 1-800-233-3247, Olympia; 1-800-662-2755, Yakima.
- Division of Access and Equal Opportunity, Washington State Department of Social and Health Services; 1-800-521-8060, TDD 1-800-521-8061.

Washington State
DEPARTMENT OF
SOCIAL & HEALTH
SERVICES

DSHS 22-484(X) LA (Rev. 2/00)